# ບົດຂ່າວ

## ກອງປະຊຸມ ສະຫລຸບການຈັດຕັ້ງປະຕິບັດກິດຈະກຳທ້າຍໂຄງການຂອງ

## ໂຄງການຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງຢູ່ໃນລະບົບນິເວດປ່າໂຄກພາກໃຕ້ ສປປ ລາວ

### ທີ່ ເມືອງ ຊົນນະບູລີ, ແຂວງ ສະຫວັນນະເຂດ.

**ແຂວງ ສະຫວັນນະເຂດ, ວັນທີ 03 ກຸມພາ 2022,** ຕາງຫນ້າຜູ້ເຂົ້າຮ່ວມຈາກ ກະຊວງກະສິກຳ ແລະ ປ່າໄມ້ (MAF) ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP), ລວມເຖິງການນຳຂັ້ນແຂວງ ແລະ ຂັ້ນເມືອງ ໄດ້ເປັນກຽດເຂົ້າຮ່ວມ ຢູ່ທີ່ເມືອງ ຊົນນະບູລີ ເພື່ອເຂົ້າຮ່ວມກອງປະຊຸມສະຫລຸບຫມາກຜົນທີ່ໄດ້ຮັບໃນການຈັດຕັ້ງປະຕິບັດກິດຈະກຳຂອງ ໂຄງການຄຸ້ມຄອງທີ່ດິນ ແລະ ປ່າໄມ້ແຫ່ງຊາດແບບຍືນຍົງຢູ່ໃນລະບົບນິເວດປ່າໂຄກພາກໃຕ້ ສປປ ລາວ (the SAFE Ecosystems Project) ປະຈຳປີ 2021 ແລະ ລາຍງານຜົນຂອງການປະເມີນໂຄງການ. ເນື່ອງຈາກ ໂຄງການໄດ້ດຳເນີນມາເຖິງບັ້ນທ້າຍ ຂອງໂຄງການໃນໄລຍະເວລາ 6ປີ ທີ່ຈະມາເຖິງໃນເດືອນ ພຶດສະພາ 2022, ໂດຍໄດ້ຮັບການສະຫນັບສະຫນຸນ ຈາກ ກອງທຶນສິ່ງແວດລ້ອມໂລກ(GEF) ແລະ ອົງການສະຫະປະຊາຊາດ ເພື່ອການພັດທະນາ (UNDP) ແລະ ຈັດຕັ້ງປະຕິບັດໂດຍ ກະຊວງ ກະສິກຳ ແລະ ປ່າໄມ້.

ໃນຊ່ວງໄລຍະເວລາ 6 ປີທີ່ຜ່ານມາ, ໂຄງການອະນຸລັກ ລະບົບນິເວດປ່າໂຄກ ໄດ້ພະຍາຍາມຈັດການກັບ ໄພຄຸກຄາມ ຢູ່ 2 ຫມວດຫມູ່ ທີ່ມີຜົນກະທົບໃຫ້ກັບ ຄວາມຫລາກຫລາຍທາງດ້ານຊີວະນາໆພັນ ແລະ ລະບົບນິເວດໃນ ແຂວງ ສະຫວັນນະເຂດ. ສິ່ງທຳອິດ ແມ່ນ ການປ່ຽນແປງ ແລະ ການເສື່ອມໂຊມຂອງ ແຫລ່ງທີ່ຢູ່ອາໄສ ແລະ ລະບົບນິເວດທາງທຳມະຊາດ. ຫມວດທີ 2 ແມ່ນ ການນຳໃຊ້ຊັບພະຍາກອນຊີວະພາບ ທາງທຳມະຊາດແບບເກີນຂະຫນາດ. ຈຸດປະສົງ ແມ່ນເພື່ອ ນຳສະເຫນີແນວທາງແກ້ໄຂໃນໄລຍະຍາວ ໂດຍການອຳນວຍຄວາມສະດວກໃນການປ່ຽນແປງ ໄປສູ່ການຈັດການທີ່ດິນ ແລະ ປ່າໄມ້ ແບບຍືນຍົງ ໃນພື້ນທີ່ປ່າໂຄກ 5ຕົວເມືອງ ແຂວງ ສະຫວັນນະເຂດ.

ໂຄງການໄດ້ ປະກາດ ເຂດປ່າສະຫງວນແຫ່ງຊາດ ແຫ່ງໃຫມ່ ( ເຂດອະນຸລັກປ່າໂຄກ ໂອງ-ມັ່ງ ແຫ່ງຊາດ) ໂດຍກວມເອົາເນື້ອທີ່ທັງຫມົດ 130,745ເຮັກຕາ. ຄຽງຄູ່ກັນນັ້ນຍັງລິເລີ່ມການ ຟື້ນຟູປ່າໄມ້ໃນພື້ນທີ່ກວ່າ 3,788 ເຮັກຕາ ຂອງພື້ນທີ່ປ່າໄມ້ ໂດຍການປູກປ່າທົດແທນ ໃນເນື້ອທີ່ 768 ເຮັກຕາ ແລະ ຈັດສັນພື້ນທີ່ປ່າຟື້ນຟູແບບທາມະຊາດ 3,020 ເຮັກຕາ. ຜູ້ທີ່ໄດ້ຮັບຜົນປະໂຫຍດໂດຍກົງແມ່ນມີຫລາຍກວ່າ 9,100ຄົນ ພາຍໃນໂຄງການ ໂດຍສ່ວນໃຫຍ່ແມ່ນມາຈາກຊຸມຊົນໃນແຕ່ລະບ້ານໃນຂອບເຂດພື້ນທີ່ໂຄງການ. 43 ຊຸມຊົນໄດ້ມີສ່ວນຮ່ວມໃນການວາງແຜນຈັດການພື້ນທີ່ປ່າໄມ້, ວຽກງານລາດຕະເວນໃນເຂດຫວງຫ້າມ ແລະ ຄວາມພະຍາຍາມໃນວຽກງານ ຟື້ນຟູປ່າໄມ້.

ທ່ານນາງ ແຄດເທີຣິນ ເຟືອງ (Catherine Phuong), ຮອງຜູ້ຕາງຫນ້າ ອົງການ ສະປະຊາຊາດ ເພື່ອການພັດທະນາ (UNDP) ປະຈຳລາວ, ໄດ້ເນັ້ນໃສ່ຄວາມສຳຄັນຂອງໂຄງການອະນຸລັກ ລະບົບນິເວດປ່າໂຄກ ໃນການສະຫນັບສະຫນຸນ ຄວາມພະຍາຍາມຂອງພາກລັດໃນຂັ້ນແຂວງໃນການຈັດການຊັບພະຍາກອນທຳມະຊາດ. ໂດຍ ເພິ່ນໄດ້ກ່າວວ່າ: " **ໃນໄລຍະເວລາ 6ປີທີ່ຜ່ານມາ, ໂຄງການອະນຸລັກ ລະບົບນິເວດປ່າໂຄກ ໄດ້ໃຫ້ການສະຫນັບສະຫນູນ ລັດຖະບານ ຂອງ ສປປລາວ ໃນການ ຈັດການຄຸ້ມຄອງເຂດພື້ນທີ່ປ່າສະຫງວນ ພາຍໃນພື້ນທີ່ ປ່າໂຄກ ໂດຍການພັດທະນາ ນະໂຍບາຍ, ກົດລະບຽບ ແລະ ກົນໄກການປະສານທີ່ຊັດເຈນ.**" ແລະຍັງໄດ້ກ່າວເພີ່ມເຕີມອີກວ່າ " **ຊັບພະຍາກອນທີ່ດິນ ແລະ ປ່າໄມ້ໃນເຂດ ເມືອງ ຊົນນະບູລີ, ພະລານໄຊ ,ພີນ , ສອງຄອນ ແລະ ທ່າປາງທອງ ປະຈຸບັນນີ້ແມ່ນລ້ວນແຕ່ໄດ້ຮັບການຈັດການທີ່ດີຂຶ້ນ ອັນເປັນຜົນມາຈາກ ໂຄງການອະນຸລັກ ລະບົບນິເວດປ່າໂຄກ.** "

ອີກວາລະໜຶ່ງ ຂອງກອງປະຊຸມນັ້ນ ຄະນະຜູ້ແທນຕາງຫນ້າ ໄດ້ເຂົ້າຮ່ວມພິທີ ມອບ-ຮັບ ຕະຫລາດຊຸມຊົນ ແກ້ວຄຳດີ ທີ່ສ້າງຂຶ້ນໃຫມ່ໂດຍໂຄງການອະນຸລັກ ລະບົບນິເວດປ່າໂຄກ. ຕະຫຼາດດັ່ງກ່າວຕັ້ງຢູ່ໃກ້ກັບ ເຂດອະນຸລັກປ່າໂຄກ ໂອງ-ມັ່ງ ແຫ່ງຊາດ. ໂດຍຄາດຫວັງວ່າໂອກາດທາງເສດຖະກິດທີ່ນອກເຫນືອຈາກນຳໃຊ້ຊັບພະຍາກອນທຳມະຊາດ ຈະເພີ່ມຂຶ້ນຈາກການຊົມໃຊ້ ຕະຫລາດຊຸມຊົນແຫ່ງນີ້ ໂດຍຢ່າງຫນ້ອຍ

10ຫມູ່ບ້ານ ພາຍໃນ ແລະ ອ້ອມຂ້າງເຂດອະນຸລັກ ຈະສາມາດເຂົ້າມາຂາຍຜົນຜະລິດກະສິກາໃນທ້ອງຖິ່ນ ຫລື ການເກັບເຄື່ອງປ່າຂອງດົງແບບຍືນຍົງ. ເປັນໂອກາດທີ່ຈະຊ່ວຍຫລຸດຜ່ອນຄວາມກົດດັນຈາກການ ການຕັດໄມ້ແບບຜິດກົດຫມາຍ ແລະ ການຫັນປ່ຽນພື້ນທີ່ປ່າໄມ້ເປັນພື້ນທີ່ກະສິກຳ ແບບບໍ່ຍືນຍົງ.

ທ່ານ ບຸນປອນ ແສງທອງ, ຮັກສາການ ຫົວຫນ້າກົມປ່າໄມ້ ໄດ້ກ່າວວ່າ: " **ພວກເຮົາມີຄວາມພາກພູມໃຈຫລາຍ ໃນສິ່ງທີ່ທາງໂຄງການອະນຸລັກ ລະບົບນິເວດປ່າໂຄກ ໄດ້ຈັດຕັ້ງປະຕິບັດຢ່າງສຳເລັດ. ກິດຈະກຳແນວທາງປະຕິບັດ ທີ່ເປັນລະດັບສາກົນໃນໂຄງການນີ້ ເຊັ່ນວ່າ: ສັນຍາອະນຸລັກ ຊຸມຊົນ, ເຊິ່ງເປັນສິ່ງທີ່ຍັງບໍ່ເຄີຍມີມາກ່ອນ ໃນແຂວງ ສະຫວັນນະເຂດ. ທຸກຄົນມີສ່ວນຮ່ວມ ໂດຍສະເພາະ ໃນລະດັບຂັ້ນເມືອງ ແລະ ຊຸມຊົນ ໄດ້ຮຽນຮູ້ຢ່າງຫລວງຫລາຍ ແລະ ສາມາດປົກປັກຮັກສາປ່າໄມ້ ໄດ້ດີຂຶ້ນ** ". ເພິ່ນຍັງໄດ້ກ່າວເພີ່ມເຕີມອີກວ່າ "**ເຮົາຫວັງວ່າຈະສາມາດສືບຕໍ່ແນວທາງ ທີ່ທາງໂຄງການອະນຸລັກ ລະບົບນິເວດປ່າໂຄກ ໄດ້ສ້າງຂຶ້ນມາ, ແຕ່ຈຳເປັນຕ້ອງມີງົບປະມານທາງດ້ານການເງິນ. ພື້ນທີ່ປ່າສະຫງວນທີ່ປະຈຸບັນກຳລັບໄດ້ຮັບການ ປັບປຸງ, ແມ່ນປະກອບມີ ຫົວຂໍ້ທີ່ກ່າວເຖິງ ກົນໄກ ຂອງ ນະວັດຕະກຳໃຫມ່ ທາງການເງິນ ເພື່ອສາມາດລະດົມທຶນ ສຳຫລັບ ພື້ນທີ່ປ່າສະຫງວນຂອງ ສປປລາວໂດຍມີທາງເລືອກເຊັ່ນ ການຫັນປ່ຽນຫນີ້ເປັນທຶນ ເຊິ່ງປະຈຸບັນກຳລັງມີການຄົ້ນຄວ້າໂດຍລັດຖະບານແຫ່ງ ສປປລາວ ໂດຍການຊ່ວຍເຫລືອຈາກ N ເພື່ອການບັນລຸເປົ້າຫມາຍນີ້** "

ໃນອີກ 2-3ເດືອນຕໍ່ຫນ້າ, ໂຄງການອະນຸລັກ ລະບົບນິເວດປ່າໂຄກ ແມ່ນຈະສຳເລັດການດຳເນີນແຕ່ລະກິດຈະກຳຂັ້ນສຸດທ້າຍກັບ ລັດຖະບານຂອງ ສປປ ລາວ ແລະ ບັນດາຊຸມຊົນທີ່ຢູ່ໃນ 5ເມືອງເປົ້າຫມາຍ ຂອງແຂວງ ສະຫວັນນະເຂດ. ໂດຍຄາດວ່າ ຈະສິ້ນສຸດການດຳເນີນງານທັງຫມົດຕາມກຳນົດ ພາຍໃນເດືອນ ພຶດສະພາ 2022.

***

ໃຫ້ທຶນສະຫນັບສະຫນຸນໂດຍ ກອງທຶນສິ່ງແວດລ້ອມໂລກ (**GEF**) ແລະ ອົງການສະຫະປະຊາຊາດເພື່ອການພັດທະນາ (**UNDP**), ໂຄງການຄຸ້ມຄອງທີ່ດິນ ແລະ ປ່າໄມ້ແບບຍືນຍົງຢູ່ໃນລະບົບນິເວດປ່າໂຄກພາກໃຕ້ ສປປ ລາວ (**the SAFE Ecosystems Project**) ຮ່ວມມື ຈັດຕັ້ງປະຕິບັດໂດຍ ກົມປ່າໄມ້, ກະຊວງກະສິກຳ ແລະ ປ່າໄມ້ ແລະ UNDP.

ໂຄງການ ກຳລັງດຳເນີນການຈັດຕັ້ງປະຕິບັດ ໃນພື້ນທີ່ປ່າໄມ້ ຂອງ ແຂວງສະຫວັນນະເຂດ ເພື່ອຮັກສາ ແຫລ່ງທີ່ຢູ່ອາໄສຂອງສັດປ່າທີ່ສຳຄັນ, ອະນຸລັກ ຄວາມຫລາກຫລາຍທາງຊີວະນາໆພັນ ແລະ ຮັກສາ ສະຫນັບສະຫນຸນ ຫນ່ວຍງານພາກລັດ ໃນການພັດທະນານະໂຍບາຍ ທີ່ເອື້ອອຳນວຍແກ່ ສິ່ງແວດລ້ອມ, ສ້າງຄວາມເຂັ້ມແຂງພາຍໃນອົງກອນ ໃນການຈັດການຊັບພະຍາກອນ ໃຫ່ແກ່ຫນ່ວຍງານພາກລັດ, ຊຸມຊົນທ້ອງຖິ່ນ ແລະ ພາກເອກະຊົນ, ໃນຂະນະທີ່ ພັດທະນາ ກົນໄກການເງິນແບບຍືນຍົງ (ໂດຍລວມທັງ ການທ່ອງທ່ຽວທຳມະຊາດແບບອະນຸລັກ ແລະ ການສົ່ງເສີມ-ປັບປຸງຊີວິດການເປັນຢູ່) ທີ່ສາມາດຮັບປະກັນໄດ້ໃນການນາໃຊ້ທີ່ດິນ ແລະ ແນວທາງການຈັດການຊັບພະຍາກອນແບບຍືນຍົງ.

https://www.la.undp.org/content/lao_pdr/en/home/projects/SustainableForestandLand

ManagementintheDryDipterocarpForestEcosystemsofSouthernLaoPDR1.html

SAFE Ecosystems Project

ຂໍ້ມູນເພີ່ມເຕີມ, ກະລຸນາຕິດຕໍ່:

**ທ່ານ ຕ້ອມ ໄຊສົງຄາມ**

thome.xaysongkham@undp.org

ຜູ້ຮັບຜິດຊອບ ແຜນງານສິ່ງແວດລ້ອມ, ຮັກສາການ ຫົວໜ້າພະແນກ ການຄຸ້ມຄອງຊັບພະຍາກອນທຳມະຊາດ, ການປ່ຽນແປງດິນຟ້າອາກາດ ແລະການຫຼຸດຜ່ອນຄວາມສ່ຽງຂອງໄພພິບັດ
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ.
ຖະໜົນ ລ້ານຊ້າງ, ຕູ້ໄປສະນີ 345 ນະຄອນຫລວງວຽງຈັນ, ສປປ ລາວ
ໂທ: +856 21 261 710 ຕໍ່ 782
ມືຖື: +856 20 2223 4436

**ທ່ານ ນາງ ອັກສອນທິບ ສົມວໍລະຈິດ**

aksonethip.somvorachit@undp.org

ຜູ້ຮັບຜິດຊອບ ຝ່າຍການສື່ສານ, ຫົວໜ້າພະແນກ ຂໍ້ມູນຂ່າວສານ,
ອົງການສະຫະປະຊາຊາດ ເພື່ອການພັດທະນາ ປະຈຳ ສປປ ລາວ.
ຖະໜົນ ລ້ານຊ້າງ, ຕູ້ໄປສະນີ 345 ນະຄອນຫລວງວຽງຈັນ, ສປປ ລາວ
ໂທ: +856 21 261 710 ຕໍ່ 778
ມືຖື: +856 20 5520 1550